**ບົດຄຳເຫັນພິເປີດກອງປະຊຸມ**
**ໂດຍ ທ. ມິນ ຟາມ - Mr. Minh Pham**
**ຜູ້ສານງານອົງການໃນລະບົບ ສປຊ, ຜູ້ຕາງໜ້າອົງການ UNDP ປະຈຳ ສປປ ລາວ**
**ກອງປະຊຸມການຈັດຕັ້ງປະຕິບັດຂະບວນການໂຕະມົນ (RTIM) 2012**
**23 ພະຈິກ 2012 – ໂຮງແຮມດອນຈັນ ພາເລດສ໌**

- ຂໍຮຽນພະນະທ່ານ ດຣ. ທອງລຸນ ສີສຸລິດ - ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ
- ຮຽນພະນະທ່ານ ສົມດີ ດວງດີ - ລັດຖະມົນຕີວ່າການກະຊວງແຜນການແລະການລົງທຶນ
- ຮຽນພະນະທ່ານລັດຖະມົນຕີ, ທ່ານເອກະອັກຄະລະສະທູດ, ບັນດາທ່ານຫົວໜ້າອົງການຈັດຕັ້ງສາກົນເພື່ອການພັດທະນາ
- ຮັກແພງ ຜູ້ຕາງໜ້າຈາກບັນດາອົງການຈັດຕັ້ງທາງສັງຄົມ ຫຼື ອົງການປະຊາສັງຄົມ
- ບັນດາທ່ານຜູ້ມີກຽດ
- ເພື່ອນມິດສະຫາຍ
- ທ່ານຍິງ ແລະ ທ່ານຊາຍ

**ພາກສະເໜີ**

ຂ້າພະເຈົ້າ ຮູ້ສຶກປິຕິຍິນດີທີ່ໄດ້ຮັບໂອກາດເປັນປະທານຮ່ວມກອງປະຊຸມ RTIM ເປັນຄັ້ງທີສອງ. ຂ້າພະເຈົ້າຫວັງວ່າເຮົາຈະສາມາດສານຕໍ່ຈາກຄວາມສຳເລັດຂອງການສົນທະນາແລກປ່ຽນໃນກອງປະຊຸມເມື່ອປີກາຍ ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ ເປັນກອງປະຊຸມທີ່ຢູ່ໃນຄວາມຊົງຈຳຍິ່ງຂຶ້ນໃນບັນທຶກການຮ່ວມມືເພື່ອການພັດທະນາຂອງພວກເຮົາ.

ຂ້າພະເຈົ້າ ເຊື່ອວ່າປະສົບການຮ່ວມມືອັນແໜ້ນແຟ້ນຂອງພວກເຮົາ ຈະ ເຮັດໃຫ້ພວກເຮົາສາມາດຊອກຫາວິທີທາງທີ່ສາມາດປະຕິບັດໄດ້ໃນຕົວຈິງແລະມີປະສິດທິພາບໃນການບັນລຸຄວາມເປັນເອກະພາບກ່ຽວກັບວິທີແກ້ໄຂສິ່ງຕ່າງໆ ຫາກ ບໍ່ດັ່ງນັ້ນອາດຈະກາຍເປັນສິ່ງທ້າທາຍຊຳເຮື້ອຕໍ່ຄວາມພະຍາຍາມໃນການບັນລຸບັນດາເປົ້າໝາຍພັດທະນາທີ່ມີຄຸນຄ່າຂອງພວກເຮົາ.

ໃນນາມວິງສາຄະນາຍາດຄູ່ຮ່ວມງານ, ຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈມາຍັງພະນະທ່ານຮອງນາຍົກລັດຖະມົນຕີທີ່ໃຫ້ກຽດເປີດພິທີກອງປະຊຸມຂອງພວກເຮົາໃນມື້ນີ້ ແລະ ໄດ້ປະກອບສ່ວນທັດສະນະຄໍາເຫັນທີ່ສໍາຄັນຕໍ່ຈຸດສຸມໃນການສົນທະນາແລກປ່ຽນຂອງພວກເຮົາ.

ພ້ອມນີ້, ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນມາຍັງພະນະທ່ານລັດຖະມົນຕີວ່າການກະຊວງແຜນການແລະການລົງທຶນທີ່ໃຫ້ກຽດເປັນປະທານກອງປະຊຸມຂອງພວກເຮົາ. ທິດນໍາຂອງທ່ານທີ່ໄດ້ໃຫ້ໄວ້ໃນກອງປະຊຸມເມື່ອປີກາຍຖືວ່າສໍາຄັນຍິ່ງໃນການກໍານົດໃຫ້ມີການສົນທະນາແລກປ່ຽນທີ່ເປີດກ້ວາງແລະມີໝາກມີຜົນ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ: ພະນະທ່ານ ຈະ ໃຫ້ການສະໜັບສະໜູນໃນລັກສະນະທີ່ຄ້າຍຄືກັນໃນການດໍາເນີນກອງປະຊຸມປີນີ້ ແລະ ຈະ ຊຸກຍູ້ພະນະທ່ານລັດຖະມົນຕີວ່າການ ແລະ ພະນະ ທ່ານລັດຖະມົນຕີຊ່ວຍຂອງບັນດາກະຊວງຕ່າງໆໃນກົງຈັກລັດ ຮ່ວມກັນແລກປ່ຽນທັດສະນະທີ່ມີໝາກມີຜົນແລະສ້າງສັນ.

ດ້ວຍເນື້ອໃນຈິດໃຈທີ່ກ່າວມານັ້ນ, ຂ້າພະເຈົ້າ ຍັງຮູ້ສຶກດີໃຈແລະຂໍຕ້ອນຮັບບັນດາຜູ້ເຂົ້າຮ່ວມຈາກບັນດາສະມາຄົມທີ່ບໍ່ຫວັງຜົນກໍາໄລ (NPAs) ທີ່ມີຈໍານວນຫຼາຍເຊັ່ນນີ້ ເຊິ່ງຖືເປັນຄັ້ງທໍາອິດໃນປະຫວັດການ ເຂົ້າສູ່ການສົນທະນາແລກປ່ຽນຂອງພວກເຮົາ, ນີ້ ສະ ແດງໃຫ້ເຫັນເຖິງການຂະຫຍາຍກ້ວາງທີ່ສໍາຄັນໃນຂອບເຂດຈໍານວນພາກສ່ວນກ່ຽວຂ້ອງທີ່ເຂົ້າຮ່ວມການສົນທະນາແລກປ່ຽນຂອງພວກເຮົາ.

ຂ້າພະເຈົ້າ ເຊື່ອວ່າ: ພວກເຮົາທຸກຄົນ ລ້ວນແຕ່ຍິນດີກັບການປະກອບສ່ວນຈາກອົງການຈັດຕັ້ງທາງສັງຄົມ ຫຼື ອົງການປະຊາສັງຄົມ ບໍ່ວ່າຈະເປັນອົງການຈັດຕັ້ງໃນລະດັບພາຍໃນ ຫຼື ອົງການ ຈັດຕັ້ງໃນລະດັບສາກົນ ທີ່ໄດ້ປະກອບສ່ວນເຂົ້າໃນບັນດາຄວາມພະຍາຍາມດ້ານການພັດທະນາຂອງພວກເຮົາ, ແລະ ມື້ນີ້ ຂ້າພະ ເຈົ້າ ກໍ ຫວັງຈະເຫັນການປະກອບສ່ວນທີ່ສ້າງສັນຈາກບັນດາທ່ານຕາງໜ້າອົງການປະຊາສັງຄົມ.

ໃນການນໍາສະເໜີບົດທໍາອິດສູ່ກອງປະຊຸມ RTIM ຂອງພວກເຮົາໃນມື້ນີ້ ແມ່ນບົດສະເໜີຈາກທ່ານເຈົ້າແຂວງຊຽງຂວາງ ເຊິ່ງຈະສະແດງໃຫ້ເຫັນເຖິງການລົງເລິກການສົນທະນາແລກປ່ຽນຂອງພວກເຮົາກ່ຽວກັບການມີສ່ວນຮ່ວມຂອງຂັ້ນທ້ອງຖິ່ນ. ນະໂອກາດນີ້, ຂ້າພະເຈົ້າ ຂໍ ຖືໂອກາດ ສະ ແດງຄວາມຂອບໃຈມາຍັງທ່ານເຈົ້າແຂວງສໍາລັບການຮັບເປັນເຈົ້າພາບຈັດກອງປະຊຸມຂໍຄໍາປຶກສາຂະບວນການໂຕະມົນໃນຂັ້ນທ້ອງຖິ່ນຢູ່ພາກເໜືອເມື່ອເດືອນພຶດສະພາທີ່ຜ່ານມາໄດ້ຢ່າງມີປະສິດທິພາບ ແລະ ຂໍຂອບໃຈນໍາການຕ້ອນຮັບເປັນຢ່າງດີ.

**ຈຸດສຸມຂອງການສົນທະນາແລກປ່ຽນ**

ກອງປະຊຸມ RTIM ຄັ້ງນີ້ ຈັດຂຶ້ນໜຶ່ງປີ ກ່ອນການຈັດກອງປະຊຸມໂຕະມົນໃນລະດັບສູງຄັ້ງໜ້າ ເຊິ່ງຖືກກໍານົດການຈັດໃຫ້ສອດຄ່ອງກັບການທົບທວນໄລຍະກາງຕໍ່ການຈັດຕັ້ງປະຕິບັດແຜນ 7 ໃນປີ 2013. ດ້ວຍເນື້ອໃຈຈິດໃຈດັ່ງກ່າວ, ຂ້າພະເຈົ້າ ຄິດ ວ່າ: ເປັນເລື່ອງສໍາຄັນທີ່ຕ້ອງສຸມການສົນທະນາແລກປ່ຽນຂອງພວກເຮົາໃນມື້ນີ້ໃສ່ບາງຂົງເຂດທີ່ສໍາຄັນຍິ່ງຂອງການພັດທະນາປະເທດ ທີ່ ຮຽກຮ້ອງໃຫ້ມີຄວາມເອົາໃຈໃສ່ທີ່ເປັນເອກະພາບກັນໃນຊຸມເດືອນຕໍ່

ໜ້າ ຖ້າພວກ ເຮົາ ຕ້ອງການ ໃຫ້ມີຄວາມຄືບໜ້າທີ່ວ່ອງໄວຂຶ້ນກ່ວາເດີມໃນການກ້າວໄປສູ່ການບັນລຸເປົ້າໝາຍສະຫະສະວັດດ້ານການພັດທະນາ (MDGs) ພາຍໃນປີ 2015 ແລະ ການ ບັນລຸວິໃສທັດຂອງການນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາໃຫ້ໄດ້ພາຍໃນປີ 2020.

ເອກະສານອະທິບາຍຄວາມເປັນມາສຳລັບກອງປະຊຸມຄັ້ງນີ້ ໄດ້ສະໜອງລາຍລະອຽດກ່ຽວກັບຄວາມຄືບໜ້າໃນດ້ານຕ່າງໆ ແຕ່ຂ້າພະເຈົ້າ ຢາກຂໍເນັ້ນໃນຫ້າຂົງເຂດຄື: ການເຕີບໂຕທາງເສດຖະກິດແລະການລົງທຶນໂດຍກົງຈາກຕ່າງປະເທດ (FDI), ການຄຸ້ມຄອງທີ່ດິນ, MDGs, ການປົກຄອງ ແລະ ການ ຮ່ວມມືເພື່ອການພັດທະນາຂອງພວກເຮົາ.

ກ່ອນທີ່ຈະເຂົ້າສູ່ບັນຫາເຫຼົ່ານັ້ນ, ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜົນສຳເລັດໂດຍລວມຂອງລັດຖະບານ (ດັ່ງທີ່ເຫັນໄດ້ໃນເອກະສານອະທິບາຍຄວາມເປັນມາຂອງກອງປະຊຸມ) ໃນການຮັກສາການຄຸ້ມຄອງເສດຖະກິດມະຫາພາກທີ່ດີທ່າມກາງແວດລ້ອມທີ່ຫຍຸ້ງຍາກຂອງໂລກ ກໍ່ ຄື ການ ສືບຕໍ່ບັນລຸການເຕີບໂຕທາງເສດຖະກິດໃນລະດັບສູງທີ່ພົວພັນກັບ FDI.

ການເຂົ້າເປັນພາຄີອົງການການຄ້າໂລກ (WTO) ຖືເປັນອີກສັນສານໜຶ່ງໃນຄວາມເອົາຈິງເອົາຈັງຂອງລັດຖະບານໃນການເປັນຄູ່ຮ່ວມງານສາກົນທີ່ຮັບຜິດຊອບ ເຊິ່ງຍັງເຫັນໄດ້ຈາກການເປັນເຈົ້າພາບຈັດກອງປະຊຸມສຸດຍອດ ASEM ໄດ້ຢ່າງມີຜົນສຳເລັດສູງເມື່ອສອງສາມອາທິດຜ່ານມາ.

ຂົງເຂດທຳອິດໃນຫ້າຂົງເຂດທີ່ຂ້າພະເຈົ້າຢາກຂໍເນັ້ນໜັກຄື: ສິ່ງທ້າທາຍທີ່ຖືກຍົກຂຶ້ນໃນກອງປະຊຸມ RTIM ເມື່ອປີກາຍກ່ຽວກັບວິທີ**ກະຈາຍເສດຖະກິດໃຫ້ມີຄວາມຫຼາກຫຼາຍຂຶ້ນ** ພ້ອມທັງຮັບປະກັນໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດເພີ່ມຂຶ້ນຈາກການລົງທຶນຂອງຕ່າງປະເທດ ແລະ ຈາກ ການຄ້າ ເພື່ອປົ້ນທິດບັນຫາຄວາມບໍ່ສະເໝີພາບດ້ານລາຍໄດ້ທີ່ເພີ່ມສູງຂຶ້ນໃນທົ່ວປະເທດ.

ພາຍໃຕ້ເນື້ອໃຈຈິດໃຈດັ່ງກ່າວນີ້, ຂ້າພະເຈົ້າ ຮູ້ສຶກ ດີໃຈທີ່ໄດ້ຮັບຮູ້ວ່າ: ມີການສ້າງແຜນໄລຍະຍາວໜຶ່ງຂຶ້ນໂດຍຄະນະສົນທະນາປຶກສາຫາລືຂະແໜງການຄ້າແລະພາກເອກະຊົນ ເພື່ອຊອກຫາວິທີບັນລຸຜົນໄດ້ຮັບຕ່າງໆຈາກການກະຈາຍເສດຖະກິດໃຫ້ມີຄວາມຫຼາກຫຼາຍ ແລະ ການ ເຊື່ອມໂຍງທາງເສດຖະກິດ ພາຍ ໃຕ້ທັດສະນະສິ່ງເສີມຄົນທຸກຍາກ. ຂ້າພະເຈົ້າ ຫວັງ ວ່າເຮົາຈະມີການເຂົ້າມີສ່ວນຮ່ວມທີ່ເຂັ້ມຂຸ້ນຂອງພາກສ່ວນກ່ຽວຂ້ອງ ເມື່ອວຽກດັ່ງກ່າວນີ້ດຳເນີນໄປໃນປີໜ້າ.

ສຳລັບຂົງເຂດທີສອງ, ຂ້າພະເຈົ້າ ຂໍອະນຸຍາດ ເວົ້າເຖິງຫົວຂໍ້ທີ່ກ່ຽວຂ້ອງກັບການສົນທະນາຄົ້ນຄ້ວາເມື່ອປີກາຍທີ່ພົວພັນກັບ**ບັນຫາການຄຸ້ມຄອງທີ່ດິນ** ໂດຍສະເພາະໃນສ່ວນທີ່ພົວພັນກັບຜົນກະທົບຈາກການລົງທຶນໂດຍກົງຂອງຕ່າງປະເທດ (FDI). ຂ້າພະເຈົ້າ ດີໃຈທີ່ບັນຫາກ່ຽວຂ້ອງຕ່າງໆ ໄດ້ຮັບການທົບທວນຄືນໃນນະໂຍບາຍທີ່ດິນແຫ່ງ

ຊາດສະບັບໃໝ່ ທີ່ ທາງກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ (MONRE) ພວມກຳລັງສ້າງເພື່ອສົ່ງເຂົ້າສູ່ຂະບວນການພິຈາລະນາຂອງສະພາແຫ່ງຊາດ.

ເປັນເລື່ອງສຳຄັນຍິ່ງທີ່ຂະບວນການທົບທວນນະໂຍບາຍດັ່ງກ່າວ ສະທ້ອນ ໃຫ້ເຫັນທຸກຄຳຄິດເຫັນແລະທຸກຄວາມເປັນຫ່ວງເປັນໄຍຈາກທັດສະນະສົ່ງເສີມຄົນທຸກຍາກ ເມື່ອພິຈາລະນາຈາກຄວາມສຳຄັນໃນດ້ານວັດທະນະທຳ, ສັງຄົມແລະເສດຖະກິດຂອງທີ່ດິນທີ່ມີຕໍ່ປະຊາຊົນ ໂດຍສະເພາະປະຊາຊົນໃນເຂດຊົນນະບົດ.

ຕົວຢ່າງ: ຂະບວນການຂໍຄຳປຶກສາກັບບັນດາອົງການຈັດຕັ້ງຂອງຜູ້ຜະລິດກະສິກຳທີ່ໄດ້ຮັບການສະໜັບສະໜູນຈາກຄະນະສົນທະນາຄົ້ນຄ້ວາການພັດທະນາຂະແໜງກະສິກຳ (ARD SWG) ໄດ້ເນັ້ນໜັກໃຫ້ເຫັນເຖິງບັນຫາໃບຕາດິນ ແລະ ບາງ ຄັ້ງເນັ້ນໃຫ້ເຫັນເຖິງຜົນກະທົບທາງລົບຂອງການລົງທຶນໂດຍກົງຈາກຕ່າງປະເທດ (FDI) ທີ່ມີຕໍ່ຊາວນາ ຫຼື ຊາວ ຜູ້ຜະລິດກະສິກຳຂະໜາດນ້ອຍ. ຂ້າພະເຈົ້າ ຫວັງ ວ່າ: ເຮົາຈະມີການສົນທະນາຄົ້ນຄ້ວາທີ່ມີໝາກມີຜົນຕື່ມອີກກ່ຽວແກ່ກັບນະໂຍບາຍທີ່ດິນເຊິ່ງເປັນຫົວຂໍ້ທີ່ສຳຄັນຍິ່ງ.

ສຳລັບຂົງເຂດທີສາມ, **ການບັນລຸເປົ້າໝາຍສະຫະສະວັດດ້ານການພັດທະນາ (MDGs)**, ສະຖານະພາບຄວາມຄືບໜ້າໃນປະຈຸບັນ ໄດ້ກ່າວເຖິງໃນລາຍລະອຽດຈຳນວນໜຶ່ງຢູ່ພາກ 3 ຂອງເອກະສານອະທິບາຍຄວາມເປັນມາ. ໂດຍລວມພົບວ່າ: ຍັງຄົງສືບຕໍ່ມີຄວາມຄືບໜ້າທີ່ເຂັ້ມແຂງແລະໜັກແໜ້ນໃນຂົງເຂດບັນດາຕົວຊີ້ວັດທີ່ສຳຄັນ ແຕ່ຂ້າພະເຈົ້າ ເປັນຫ່ວງນຳບັນດາຕົວຊີ້ວັດທີ່ບໍ່ໄດ້ຕາມເປົ້າ ເຊິ່ງພວກເຮົາ ໄດ້ສົນທະນາຄົ້ນຄ້ວາກັນເມື່ອປີກາຍ ກໍ່ຄື ບາງເປົ້າໝາຍໃໝ່ ທີ່ເບິ່ງຄືວ່າ ບໍ່ໄດ້ຄືບໜ້າດີເທົ່າທີ່ຄວນໄປໃນທິດບວກ. ນີ້ ຍັງສະທ້ອນໃຫ້ເຫັນເຖິງຄວາມບໍ່ສະເໝີພາບທີ່ຍັບກ້ວາງອອກໃນທົ່ວປະເທດ.

ພາຍໃຕ້ເນື້ອໃນຈິດໃຈດັ່ງກ່າວ, ຖືເປັນເລື່ອງທີ່ໜ້າຊື່ນໃຈທີ່ທາງລັດຖະບານ ໄດ້ສືບຕໍ່ລົງທຶນຫຼາຍຂຶ້ນໂດຍລວມໃສ່ຂະແໜງສາທາແລະສຶກສາ. ຢ່າງໃດກໍ່ດີ, ຄວາມເປັນຈິງມີຢູ່ວ່າ:

- ຫາກປາສະຈາກການຈັດສັນງົບປະມານທີ່ມີຢູ່ເພີ່ມຂຶ້ນຕື່ມພາຍໃນຂະແໜງການເຂົ້າສູ່ບັນດາຂໍ້ລິເລີ່ມສະກັດກັ້ນ ແລະ ໃຫ້ບູລະມະສິດເພື່ອຄົນທຸກຍາກ,
- ຫາກປາສະຈາກການຈັດສັນຊັບພະຍາກອນມະນຸດເພີ່ມຂຶ້ນກ່ວາເດີມໃສ່ບັນດາບູລິມະສິດເຫຼົ່ານັ້ນ, ແລະ
- ຫາກປາສະຈາກຄວາມພະຍາຍາມທີ່ມີການປະສານງານກັນເປັນຢ່າງດີເພື່ອຜ່ານຜ່າບັນດາຂໍ້ຈຳກັດຕົວຈິງ ທີ່ພວກເຮົາຮັບຮູ້ໃນແຕ່ລະຂະແໜງການ

ເຫັນວ່າ: ມີຄວາມເປັນໄປໄດ້ສູງທີ່ບັນດາເປົ້າໝາຍ MDG ທີ່ກຳນົດໄວ້ສຳລັບປີ 2015 ຈະບໍ່ສາມາດບັນລຸໄດ້.

ດ້ວຍເຫດນັ້ນ, ຂ້າພະເຈົ້າ ຂໍ ຊຸກຍູ້ລັດຖະບານໃຫ້ເພີ່ມການຈັດບູລິມະສິດໃນດ້ານການຈັດສັນງົບປະມານໃຫ້ແກ່ຂະແໜງການເຫຼົ່ານັ້ນ ເພື່ອທີ່ວ່າຈະມີຊັບພະຍາກອນຫຼາຍຂຶ້ນ ແລະ ບັນດາ ແຜນງານໃນພາກປະຕິບັດຕົວຈິງທີ່ພວກ

ເຮົາຮູ້ວ່າຈະສ້າງໝາກຜົນຕໍ່ການບັນລຸເປົ້າໝາຍ MDG. ພວກເຮົາ ພ້ອມ ແລ້ວທີ່ຈະຮ່ວມມືໃນຄວາມພະຍາຍາມດັ່ງກ່າວ ແລະ ເຂົ້າມີສ່ວນຮ່ວມກັບບັນດາທ່ານໃນການແກ້ໄຂບັນດາ MDGs ທີ່ບໍ່ທັນໄດ້ຕາມເປົ້າ.

ພວກເຮົາ ໄດ້ເລີ່ມການສົນທະນາຈຳນວນໜຶ່ງແລ້ວກ່ຽວກັບການແກ້ໄຂບັນຫາການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ພວກເຮົາ ຈະຍິນດີຫາກມີການມອບໝາຍສະຖາບັນ ຫຼື ອົງການ ຊີ້ນຳຫຼັກແຫຼ່ງທີ່ມີສິດອຳນາດ ແລະ ມີພາລະບົດບາດໃນການປະສານງານບັນດາຄວາມພະຍາຍາມເຂັ້ມຂຸ້ນທີ່ວກົງຈັກລັດກ່ຽວກັບວາລະເອກະພາບ ໃນສ່ວນທີ່ທາງບັນດາຄູ່ຮ່ວມພັດທະນາ ສາມາດປະກອບສ່ວນໄດ້.

ລັດຖະບານ ໂດຍໄດ້ຮັບການຊ່ວຍເຫຼືອຈາກບັນດາອົງການໃນລະບົບ ສປຊ ພວມ ກະກຽມບົດລາຍງານ MDG ແຫ່ງຊາດສະບັບໜ້າ ທີ່ ຈະໄປນຳສະເໜີຕໍ່ກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດໃນວາລະລາຍການພິເສດໃນປີ 2013. ດັ່ງນັ້ນ, ທຸກການປັບປຸງ ທີ່ເຮົາສາມາດເຮັດໄດ້ໃນການແກ້ໄຂບັນດາ MDGs ທີ່ບໍ່ໄດ້ຕາມເປົ້າເຫຼົ່ານີ້ ສາມາດເອົາໄປເວົ້າໃນບົດລາຍງານດັ່ງກ່າວນັ້ນ.

ຂົງເຂດຄວາມເປັນຫ່ວງເປັນໄຍທີສີ່ ແມ່ນ**ການປົກຄອງ**. ຂ້າພະເຈົ້າ ຂໍຍ້ອງຍໍຊົມເຊີຍລັດຖະບານທີ່ໄດ້ກຳນົດສາຍພົວພັນປະສານງານຂັ້ນສູງສຳລັບການປັບປຸງບູລະນະການປົກຄອງເຂົ້າໄວ້ໃນລະບົບ ໃນປີ 2012 ນີ້.

ພ້ອມນັ້ນ ຍັງ ເຫັນໄດ້ຄວາມຄືບໜ້າສຳຄັນໃນການສ້າງແຜນງານທີ່ເນັ້ນໃສ່ວິທີການດຳເນີນງານຕ່າງໆຕໍ່ຂົງເຂດທີ່ມີຄວາມສຳຄັນດັ່ງກ່າວ ເຊັ່ນ: ການປັບປຸງບູລະນະອຳນາດການປົກຄອງທ້ອງຖິ່ນ, ຂະແໜງການກົດໝາຍແລະຍຸຕິທຳ, ແລະ ສະພາ ແຫ່ງຊາດ. ຂ້າພະເຈົ້າ ຂໍຊຸກຍູ້ໃຫ້ບັນດາເພື່ອນຮ່ວມງານຈາກຄູ່ຮ່ວມພັດທະນາໃຫ້ປະກອບສ່ວນເພີ່ມເຕີມເຂົ້າໃນບັນດາຄວາມພະຍາຍາມຮ່ວມເຫຼົ່ານັ້ນ.

ເປັນທີ່ໜ້າຊື່ນໃຈ ທີ່ ລັດຖະບານ ໄດ້ເພີ່ມອັດຕາການຮັບຮອງເອົາບັນດາ NPAs, ເຊິ່ງຫວ່າງບໍ່ດົນມານີ້ ໄດ້ເພີ່ມຂຶ້ນເປັນປະມານ 100 ສະມາຄົມ ເມື່ອທຽບໃສ່ເວລາທີ່ເຮົາປະຊຸມກັນປີກາຍທີ່ມີພຽງແຕ່ 10 ສະມາຄົມ.

ບາງທີຂົງເຂດທີ່ຍາດໄດ້ຫຼາຍສຸດໃນການປັບປຸງບູລະນະການປົກຄອງໃນປີນີ້ ແມ່ນຄວາມພະຍາຍາມຈັດຕັ້ງປະຕິບັດ 'ສາມສ້າງ' ເພື່ອແບ່ງຂັ້ນໜ້າທີ່ຮັບຜິດຊອບສະເພາະດ້ານການພັດທະນາແລະຊັບພະຍາກອນໃຫ້ແກ່ຂັ້ນແຂວງ, ເມືອງແລະບ້ານ. ຂໍ້ລິເລີ່ມດັ່ງກ່າວ ໜ້າ ຈະສົ່ງຜົນກະທົບທີ່ວົງກວ້າງຕໍ່ວຽກງານຮ່ວມສ່ວນໃຫຍ່ຂອງພວກເຮົາໃນການສ້າງຄວາມສາມາດທີ່ຈຳເປັນໃນຂັ້ນເຫຼົ່ານັ້ນເພື່ອໃຫ້ບັນລຸ MDGs. ທ່ານເຈົ້າແຂວງຊຽງຂວາງ ຈະນຳພາພວກເຮົາເຂົ້າສູ່ການສົນທະນາໃນເຊົ້າຂອງມື້ນີ້ກ່ຽວກັບຜົນກະທົບຕ່າງໆຕໍ່ການຮ່ວມມືຂອງພວກເຮົາ.

ສຸດທ້າຍ, ຂົງເຂດທີຫ້າທີ່ຂ້າເຈົ້າຢາກຂໍເນັ້ນ ຄື : ຂ້າພະເຈົ້າ ຢາກ ເວົ້າກ່ຽວກັບຂົງເຂດຕ່າງໆທີ່ພວກເຮົາສາມາດປັບປຸງການຮ່ວມມືຂອງພວກເຮົາໃຫ້ມີ**ຜົນສຳເລັດທີ່ມີປະສິດທິພາບຂອງການພັດທະນາ**. ຂ້າພະເຈົ້າ ຂໍຖືໂອກາດນີ້ຍ້ອງຍໍຊົມເຊີຍລັດຖະບານໃນດ້ານການຊີ້ນຳ-ນຳພາທີ່ມີປະສິດທິພາບແລະບັນດາຄວາມພະຍາຍາມທີ່ຂຸ້ນຂ້ຽວໃນ

ການລວມເອົາຜົນໄດ້ຮັບຈາກກອງປະຊຸມຂັ້ນສູງວ່າດ້ວຍປະສິດທິພາບຂອງການຊ່ວຍເຫຼືອຄັ້ງທີສີ່ ເຊິ່ງຈັດຂຶ້ນຢູ່ພູຊານ ຫວ່າງປີກາຍນີ້ ເຂົ້າໃນບັນດາກົນໄກແຫ່ງຊາດຂອງການຮ່ວມມືທີ່ເນັ້ນໃສ່ໝາກຜົນສໍາເລັດຂອງການພັດທະນາ.

ຕົວຢ່າງ: ໄດ້ມີການຈັດຕັ້ງປະຕິບັດການປ່ຽນແປງຕ່າງໆຕໍ່ພາລະບົດບາດຂອງບັນດາຄະນະສົນທະນາຄົ້ນຄ້ວາຂອງຂະແໜງການ (SWGs) ຢ່າງປະສົບຜົນສໍາເລັດ ເຊິ່ງເຫັນໄດ້ຈາກແຕ່ລະບົດລາຍງານຂອງບົດລາຍງານທັງສິບສະບັບທີ່ພວກເຮົາໄດ້ຮັບໃນກອງປະຊຸມມື້ນີ້. ຂ້າພະເຈົ້າ ຂໍ ຮຽກຮ້ອງໃຫ້ປະທານແລະປະທານຮ່ວມຂອງຄະນະສົນທະນາຕ່າງໆ ໃຫ້ຮັບປະກັນວ່າ: ພວກເຮົາ ຮັດ ແໜ້ນແລະລົງເລິກການມີສ່ວນຮ່ວມພາຍໃຕ້ການມີຄູ່ຮ່ວມງານໃນຂອບເຂດກ້ວາງຂວາງທີ່ຮຽກຮ້ອງໃນກອງປະຊຸມທີ່ພູຊານ ເຊິ່ງໃນນັ້ນລວມທັງການມີສ່ວນຮ່ວມຂອງພາກເອກະຊົນ ແລະ ອົງການປະຊາສັງຄົມ.

ສໍາຄັນບໍ່ໜ້ອຍກ່ວາກັນຄື: ບັນດາຄູ່ຮ່ວມພັດທະນາສ່ວນໃຫຍ່ ໄດ້ເຂົ້າຮ່ວມໃນຄວາມພະຍາຍາມໃຫຍ່ຫຼວງຂອງລັດຖະບານເພື່ອຕື່ມຂໍ້ມູນເຂົ້າໃນຖານຂໍ້ມູນ ODA ທີ່ຮູ້ຈັກກັນໃນຊື່: ຖານຄຸ້ມຄອງການຊ່ວຍເຫຼືອ (AMP). ດ້ວຍເຫດນັ້ນ, ພວກເຮົາ ຈຶ່ງມີການວິເຄາະທີ່ດີເລີດກ່ຽວກັບກະແສໄຫຼຂອງ ODA ທີ່ໄດ້ນໍາສະເໜີໃນຮ່າງບົດລາຍງານການຈັດຕັ້ງປະຕິບັດການຊ່ວຍເຫຼືອຈາກຕ່າງປະເທດ (FAIR). ກ່ຽວແກ່ກັບເລື່ອງນີ້, ຂ້າພະເຈົ້າ ຂໍຊຸກຍູ້ໃຫ້ຄູ່ຮ່ວມງານທຸກພາກສ່ວນ ເຊິ່ງລວມທັງພາກສ່ວນທີ່ມາຈາກທາງໃຕ້ ໃຫ້ສະໜອງຂໍ້ມູນຂ່າວສານກ່ຽວກັບການຊ່ວຍເຫຼືອຂອງຕົນໃຫ້ແກ່ຄວາມພະຍາຍາມຂອງ ສປປ ລາວ ໃນດ້ານການພັດທະນາ.

ຄືດັ່ງທີ່ໄດ້ກ່າວໄວ້ໃນພາກ 5 ຂອງເອກະສານອະທິບາຍຄວາມເປັນມາ, ຜົນການປັບປຸງເຫຼົ່ານັ້ນ ຍັງໄດ້ສ່ອງແສງໃຫ້ເຫັນໃນຮ່າງຂໍ້ຕົກລົງໃໝ່ລະຫວ່າງລັດຖະບານ ແລະ ຄູ່ ຮ່ວມພັດທະນາ (ແຜນດໍາເນີນງານພາຍໃນປະເທດຂອງຖະແຫຼງການນະຄອນຫຼວງວຽງຈັນ) ເຊິ່ງເປັນສິ່ງທີ່ ຂ້າພະ ເຈົ້າ ຂໍ ຊຸກຍູ້ໃຫ້ບັນດາທ່ານທົບທວນ ແລະ ປະກອບສ່ວນ ເພື່ອເຮັດໃຫ້ເປັນຂອບການຮ່ວມມືທີ່ມີປະສິດທິພາບລະຫວ່າງພວກເຮົາໃນຊຸມປີຕໍ່ໜ້າ.

ໃນການກະກຽມໃສ່ກອງປະຊຸມໂຕະມົນຂັ້ນສູງ (RTM) ທີ່ຈະຈັດຂຶ້ນໃນປີໜ້າ, ຂ້າພະເຈົ້າ ຂໍສະເໜີໃຫ້ພວກເຮົາໃຊ້ເວລາທົບທວນຄືນເພີ່ມເຕີມຕື່ມອີກໃນໄລຍະສອງສາມເດືອນຂ້າງໜ້າກ່ຽວກັບວິທີທີ່ຈະເຮັດແນວໃດໃຫ້ການສົນທະນາແລກປ່ຽນຂັ້ນສູງດັ່ງກ່າວ ເປັນເວທີທີ່ມີຄວາມໝາຍຄວາມສໍາຄັນຍິ່ງຂຶ້ນໃນການເພີ່ມການເປັນຄູ່ຮ່ວມງານຂອງພວກເຮົາໃຫ້ມີຜົນສໍາເລັດເພີ່ມສູງຂຶ້ນໃນດ້ານການພັດທະນາ.

ຂໍຂອບໃຈຫຼາຍໆ.